# ສູນກາງແມ່ຍິງຈັດຕັ້ງການເຜີຍແຜ່ບັນຫາເງິນຕາ



ໃນຕອນບ່າຍຂອງວັນທີ 13 ທັນວາ 2011 ຜ່ານມານີ້ ສູນກາງສະຫະພັນແມ່ຍິງລາວຮ່ວມກັບທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງໃຫ້ມີກອງປະຊຸມເຜີຍແຜ່ລັດຖະບັນຍັດ ແລະ ດຳລັດກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມການນຳໃຊ້ເງິນກີບໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ນາງ ດຣ ອຳໄພວັນ ຄຳແສງສີວິໄລ ຮອງປະທານສູນກາງສະຫະພັນແມ່ຍິງລາວ, ພ້ອມນີ້ກໍມີບັນດາຄະນະນຳ ແລະ ສະມາຊິກສະຫະພັນແມ່ຍິງຈາກສູນກາງ ແລະ ແມ່ຍິງຈາກນະຄອນຫຼວງວຽງຈັນ ແລະ ບັນດາຄະນະແມ່ຍິງຈາກກະຊວງ, ຂະແໜງການເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໃນຄັ້ງນີ້ ນັກວິທະຍາກອນຈາກທະນາຄານແຫ່ງ ສປປ ລາວ ກໍໄດ້ຍົກໃຫ້ເຫັນເນື້ອໃນຈິດໃຈຂອງລັດຖະບັນຍັດ ແລະ ດຳລັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ, ບັນດາລະບຽບການ, ວິທີການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ພ້ອມນີ້ທ່ານກໍໄດ້ຢືນຢັນເຖິງຜົນສຳເລັດໃນການເຄື່ອນໄຫວຄຸ້ມຄອງເງິນຕາຕ່າງປະເທດໃນຂອບເຂດທົ່ວປະເທດ ແລະ ຍັງໄດ້ຮຽກຮ້ອງມາຍັງຄະນະນຳສະຫະພັນແມ່ຍິງທຸກຂັ້ນ, ເອື້ອຍນ້ອງແມ່ຍິງທຸກຄົນຈົ່ງໄດ້ໃຫ້ການຮ່ວມມື ແລະ ສືບຕໍ່ນຳໃຊ້ເງິນກີບໃຫ້ເປັນຂະບວນການ ແລະ ບໍ່ນຳໃຊ້ເງິນຕາຕ່າງປະເທດຢ່າງຊະຊາຍ, ນອກນີ້ກໍຍັງຍົກໃຫ້ເຫັນເຖິງວິທີການໃຊ້ເງິນກີບໃຫ້ຖືກວິທີ ແລະ ການຮັກສາຄຸນນະພາບຂອງເງິນກີບ ເພາະວ່າໃບເງິນທີ່ມວນຊົນນຳໃຊ້ເຂົ້າໃນຂອດຈໍລະຈອນນັ້ນ ເຊິ່ງລັດຖະບານໄດ້ໃຊ້ງົບປະມານໃນການພິມເງິນເປັນຈຳນວນບໍ່ໜ້ອຍ.

ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດອັນດີ ເຊິ່ງມີບັນດາເອື້ອຍນ້ອງແມ່ຍິງໄດ້ມີການປະກອບຄຳຄິດຄຳເຫັນອັນຕັ້ງໜ້າເຂົ້າໃນວຽກງານການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມການນຳໃຊ້ເງິນກີບ ແລະ ຈະພ້ອມກັນຈັດຕັ້ງປະຕິບັດໃຫ້ລັດຖະບັນຍັດ ແລະ ດຳລັດດັ່ງກ່າວໄດ້ຮັບໝາກຜົນຕົວຈິງຍິ່ງໆຂຶ້ນ.